# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງ, ຂ່າວໃນພາກພື້ນ ແລະ ສາກົນ............ ໜ້າ 01-07**

**II. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ.................................................. ໜ້າ 08-13**



ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ

ປະຈຳເດືອນ **ກັນຍາ 2022**



**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ສະພາບການພົ້ນເດັ່ນຂອງບັນດາພັກການເມືອງ, ພາກພື້ນ ແລະ ສາກົນ

**1. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ**

**1) ພັກກອມມູນິດຫວຽດນາມ**

ພັກກອມມູນິດຫວຽດນາມ ສືບຕໍ່ນຳພາ-ຊີ້ນຳ ວຽກງານຂອງພັກ-ຂອງຊາດ, ໃນນັ້ນກໍແມ່ນ ວຽກງານກວດກາພັກ ເຊິ່ງໃນວັນທີ 16/9/2022, ສະຫາຍເລຂາທິການໃຫຍ່ ຫງວຽນຝູຈ້ອງ ໄດ້ເປັນປະທານກອງປະຊຸມກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກກອມມູນິດຫວຽດນາມ ເພື່ອພິຈາລະນາປະຕິບັດວິໄນ ຕໍ່ສະມາຊິກພັກ-ພະນັກງານ ກ່ຽວຂ້ອງກັບວຽກງານປ້ອງກັນ, ຕ້ານພະຍາດໂຄວິດ-19 ແລະ ສໍ້ລາດບັງຫຼວງ ພົວພັນກັບບໍລິສັດຫຸ້ນສ່ວນເຕັກໂນໂລຊີ ຫວຽດອາ. ຜ່ານການພິຈາລະນາ ເຫັນວ່າ ຄະນະປະຈຳພັກແຂວງຫ້າຍເຢືອງ ສະໄໝ 2020-2025, ຄະນະພັກຄະນະກຳມະການປະຊາຊົນແຂວງ ສະໄໝ 2016-2021, 2021-2026 ໄດ້ລະເມີດຫຼັກການລວມສູນປະຊາທິປະໄຕ, ລະບອບລະບຽບການເຮັດວຽກ; ຂາດຄວາມຮັບຜິດຊອບສະຖານໜັກໃນການນຳພາ, ຊີ້ນຳ; ເຊັນຫຼາຍເອກະສານທາງລັດຖະການ, ຂໍ້ສະຫຼຸບ ທີ່ມີເນື້ອໃນຜິດກັບຂໍ້ກຳນົດກົດລະບຽບພັກ, ກົດໝາຍຂອງລັດ; ຂາດການຕິດຕາມ, ກວດກາ, ກົມການເມືອງຕົກລົງ ລົງວິໄນພັກ "ຕັກເຕືອນ" ຕໍ່ຄະນະປະຈຳພັກແຂວງຫ້າຍເຢືອງ ສະໄໝ 2020-2025 ແລະ ຄະນະເລຂາທິການສູນກາງພັກ "ສຳຫຼວດ" ຄະນະພັກຄະນະກຳມະການປະຊາຊົນແຂວງ ສະໄໝ 2021-2022; ຕົກລົງ ປົດທຸກຕຳແໜ່ງ ແລະ ປົດອອກຈາກພັກ ຂອງບັນດາສະຫາຍເລຂາພັກແຂວງ ທີ່ກະທຳຜິດດັ່ງກ່າວ.

ວັນທີ 14/9/2022, ທ່ານ ຝ້າມ ມິງຈິ໋ງ, ນາຍົກລັດຖະມົນຕີຫວຽດນາມ ໄດ້ເປັນປະທານກອງປະຊຸມປະເມີນຜົນການວາງແຜນກຳນົດສັງລວມແຫ່ງຊາດ ອາຍຸການ 2021-2030 ແລະ ວິໄສທັດຮອດປີ 2050, ເປັນຄັ້ງທຳອິດທີ່ຫວຽດນາມ ປະຕິບັດການວາງແຜນກຳນົດລະດັບຊາດ ເພື່ອແນໃສ່ຕີລາຄາຄືນສະພາບການຕົວຈິງ ແລະ ສະເໜີກຳນົດທິດການຈັດສັນ, ສັບຊ້ອນຄືນໃໝ່ຂົງເຂດພັດທະນາຂອງປະເທດ, ເປີດຂົງເຂດພັດທະນາໃໝ່, ກາລະໂອກາດພັດທະນາໃໝ່, ກຳລັງໜູນພັດທະນາໃໝ່ ເພື່ອບັນລຸໄດ້ເປົ້າໝາຍຮອດປີ 2045 ກາຍເປັນປະເທດພັດທະນາມີລາຍຮັບສູງ. ທ່ານ ຝ້າມ ມິງຈິ໋ງ ໄດ້ມີຄຳເຫັນເນັ້ນໜັກວ່າ: ການວາງແຜນກຳນົດຕ້ອງມີຈິນຕະນາການປ່ຽນແປງໃໝ່, ມີວິໄສທັດຍຸດທະສາດ, ກຳລັງໜູນເລີ່ມຈາກການປ່ຽນແປງໃໝ່. ຈິນຕະນາການປ່ຽນແປງໃໝ່ນີ້ ໄດ້ສ້າງແຫຼ່ງກຳລັງ ແລະ ກຳລັງໜູນ. ວິໄສທັດຍຸດທະສາດ ແມ່ນເຮັດແນວໃດໃຫ້ການວາງແຜນກຳນົດຕ້ອງຊີ້ໃຫ້ເຫັນຄວາມແຕກຕ່າງ, ກາລະໂອກາດທີ່ພົ້ນເດັ່ນ, ທ່າໄດ້ປຽບໃນການແກ້ງແຍ້ງ, ເພື່ອມີວິທີການແກ້ໄຂ ແລະ ຕິດແທດຕົວຈິງ ເພື່ອເສີມຂະຫຍາຍກຳລັງພາຍໃນ. ເພາະວ່າກຳລັງພາຍໃນ ແມ່ນພື້ນຖານທີ່ສຳຄັນທີ່ສຸດ, ສ່ວນກຳລັງແຮງພາຍນອກແມ່ນບຸກທະລຸ. ດັ່ງນັ້ນ, ຕ້ອງປຸກລະດົມແຫຼ່ງກຳລັງແນວໃດ ເພື່ອປະຕິບັດການວາງແຜນຜັງ, ມີລັກສະນະເປັນໄປໄດ້ຂອງການວາງແຜນກຳນົດ.

**2). ພັກກອມມູນິດຈີນ**

ພັກກອມມູນິດຈີນ ສືບຕໍ່ຊຸ້ນຂ້ຽວກະກຽມໃຫ້ແກ່ກອງປະຊຸມໃຫຍ່ ຄັ້ງທີ 20 ຂອງພັກ ທີ່ຈະຈັດຂຶ້ນ ໃນວັນທີ 16 ຕຸລາ 2022 ນີ້, ເຊິ່ງໃນວັນທີ 30/8/2022, ສະຫາຍ ສີຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ ໄດ້ເປັນປະທານກອງປະຊຸມກົມການເມືອງສູນກາງພັກກອມມູນິດຈີນ ເພື່ອກະກຽມໃຫ້ແກ່ກອງປະຊຸມຄົບຄະນະ ຄັ້ງທີ 7 ຂອງຄະນະກຳມະການສູນກາງພັກກອມມູນິດຈີນ ຊຸດທີ 19 ໃນວັນທີ 9/10/2022 ແລະ ເພື່ອຮັບຮອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ 20 ຂອງພັກກອມມູນິດຈີນ ທີ່ຈະຈັດຂຶ້ນໃນວັນທີ 16/10/2022. ສະຫາຍ ສີຈິ້ນຜິງ ໄດ້ເນັ້ນໜັກວ່າ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ 20 ເປັນກອງປະຊຸມຄັ້ງຍິ່ງໃຫຍ່ທີ່ສຳຄັນທີ່ສຸດຂອງພັກກອມມູນິດຈີນ ແລະ ປະຊາຊົນຈີນບັນດາເຜົ່າທົ່ວປະເທດ, ເປັນບາດກ້າວທີ່ຍິ່ງໃຫຍ່ໃນການກໍ່ສ້າງປະເທດສັງຄົມນິຍົມທີ່ທັນສະໄໝຮອບດ້ານ ກໍຄືການຈັດຕັ້ງປະຕິບັດເປົ້າໝາຍສູ້ຊົນເທດການປະຫວັດສາດສຳຄັນ 100 ປີ; ພັກກອມມູນິດຈີນ ຍຶດໝັ້ນລັດທິມາກ-ເລນິນ, ແນວຄິດເໝົາເຈີຕຸງ, ທິດສະດີເຕິ້ງສຽວຜິງ, ການຈັດຕັ້ງປະຕິບັດແນວຄິດ ສີຈິ້ນຜິງ ກ່ຽວກັບການສ້າງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນໄລຍະໃໝ່ຢ່າງຮອບດ້ານ; ສະຫຼຸບຜົນສຳເລັດອັນຍິ່ງໃຫຍ່ໃນໄລຍະ 5 ປີ ຜ່ານມາ ຂອງສູນກາງພັກກອມມູນິດຈີນ ທີ່ມີ ສະຫາຍ ສີຈິ້ນຜິງ ເປັນ

ແກນນໍາ, ສືບຕໍ່ຊຸກຍູ້ການກໍ່ສ້າງປະຊາຄົມຮ່ວມຊະຕາກໍາມວນມະນຸດ ແລະ ຟື້ນຟູຄວາມຈະເລີນຮຸ່ງເຮືອງຂອງຈີນຢ່າງຮອບດ້ານ.

ສໍາລັບວຽກງານຕ່າງປະເທດຂອງພັກ-ລັດ ຈີນ ໃນເດືອນກັນຍານີ້ ກໍມີຫຼາຍເຫດການສໍາຄັນ ເປັນຕົ້ນ, ໃນວັນທີ 12/9/2022, ສປ ຈີນ ແລະ ຍີ່ປຸ່ນ ໄດ້ຈັດກອງປະຊຸມຜ່ານວີດີໂອທາງໄກ ເພື່ອລະນຶກວັນສ້າງຕັ້ງສາຍພົວພັນທາງການທູດ ຄົບຮອບ 50 ປີ, ທ່ານ ຫວັງອີ້, ທີ່ປຶກສາແຫ່ງລັດ, ລັດຖະມົນຕີກະຊວງການຕ່າງປະເທດຈີນ ໄດ້ກ່າວຄໍາປາໄສ ວ່າ: ຢູ່ຮ່ວມກັນຢ່າງມີໄມຕີຈິດຖານບ້ານໃກ້ເຮືອນຄຽງ ແລະ ການເຮັດໃຫ້ທະວີບອາຊີມີຄວາມຈະເລີນຮຸ່ງເຮືອງດ້ວຍການພັດທະນາແມ່ນຊາຕາກໍາຮ່ວມກັນ, ແມ່ນເປົ້າໝາຍພື້ນຖານ ແລະ ຄວາມຮັບຜິດຊອບຂອງຈີນ ແລະ ຍີ່ປຸ່ນ. ພ້ອມນັ້ນ, ທ່ານ ຫວັງອີ້ ໄດ້ສະເໜີ 5 ຂໍ້ກ່ຽວກັບການພົວພັນລະຫວ່າງຈີນ ແລະ ຍີ່ປຸ່ນ ຄື: ຕ້ອງເຄົາລົບຕາມຄໍາໝັ້ນສັນຍາ, ປົກປ້ອງພື້ນຖານດ້ານການເມືອງຂອງການພົວພັນສອງປະເທດ; ຕ້ອງພິຈາລະນາເຖິງພາກສ່ວນໃຫຍ່, ກໍາແໜ້ນທິດທາງການພັດທະນາຢ່າງຖືກຕ້ອງ; ຕ້ອງລົງເລິກການຮ່ວມມື, ບັນລຸການໄດ້ຮັບຜົນປະໂຫຍດຮ່ວມກັນທີ່ມີລະດັບສູງກວ່າເກົ່າ; ຕ້ອງເພີ່ມທະວີການຊີ້ນໍາ, ສ້າງຄວາມຮັບຮູ້ຕໍ່ກັນຢ່າງຕັ້ງໜ້າ ແລະ ມີໄມຕີຈິດ ແລະ ຕ້ອງສອດຄ່ອງກັບກະແສຫຼັກຂອງຍຸກສະໄໝ, ປະຕິບັດຕາມລັດທິຫຼາຍຝ່າຍຢ່າງແທ້ຈິງ. ທ່ານ ໂຢຊິມາຊາ, ລັດຖະມົນຕີກະຊວງການຕ່າງປະເທດຍີ່ປຸ່ນ ກ່າວຄໍາປາໄສຜ່ານທາງວີດີໂອວ່າ: ສອງຝ່າຍຄວນສຸມສາຍຕາໃສ່ 50 ປີຂ້າງໜ້າ, ພະຍາຍາມຮ່ວມກັນເພື່ອປະກອບສ່ວນສ້າງການພົວພັນຍີ່ປຸ່ນ-ຈີນຢ່າງມີລັກສະນະສ້າງສັນ ແລະ ໝັ້ນຄົງ.

ວັນທີ 19 ກັນຍາ 2022, ທ່ານ ຫຼີເຄີ້ສຽງ, ນາຍົກລັດຖະມົນຕີຈີນ ໄດ້ສົນທະນາຜ່ານໂທລະສັບ ກັບ ທ່ານ ຟາມມິງຈິ່ງ, ນາຍົກລັດຖະມົນຕີຫວຽດນາມ. ທ່ານ ຫຼີເຄີ້ສຽງ ໄດ້ກ່າວວ່າ: ຈີນສະແດງຄວາມຊົມເຊີຍຕໍ່ເສດຖະກິດຫວຽດນາມ ທີ່ໄດ້ພັດທະນາຢ່າງໝັ້ນຄົງ, ມີຜົນດີຕໍ່ຄວາມໝັ້ນຄົງຂອງຕ່ອງໂສ້ອຸດສາຫະກໍາ ແລະ ຕ່ອງໂສ້ການສະໜອງຂອງປະເທດອາຊີຕາເວັນອອກ. ຈີນ ຍິນດີຮ່ວມກັບຫວຽດນາມ ເສີມຂະຫຍາຍທ່າແຮງບົ່ມຊ້ອນຂອງຫວຽດນາມ, ຊ່ວຍຊຸກຍູ້ສິ່ງເສີມເຊິ່ງກັນແລະກັນ ໃນຂົງເຂດອຸດສາຫະກໍາ, ການຄ້າ, ການອໍານວຍຄວາມສະດວກໃນເຂດຊາຍແດນຮ່ວມກັນ ໃຫ້ສະດວກສະບາຍຂຶ້ນກວ່າເກົ່າ, ຈະເພີ່ມການນໍາເຂົ້າຜະລິດຕະພັນກະສິກໍາທີ່ມີຄຸນນະພາບຂອງຫວຽດນາມ, ຍິນດີຮັບເອົານັກສຶກສາຫວຽດນາມ ກັບຄືນມາຮຽນແບບເຊິ່ງໜ້າ ຢູ່ ສປ ຈີນ ພາຍຫຼັງທີ່ຜ່ານການຮຽນແບບອອນລາຍ ໃນໄລຍະການລະບາດຂອງພະຍາດໂຄວິດ-19. ສ່ວນ ທ່ານ ຟາມມິງຈິ່ງ ກ່າວວ່າ: ການເສີມຂະຫຍາຍສາຍພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານ ຫວຽດນາມ-ຈີນ ແມ່ນ ນະໂຍບາຍຕ່າງປະເທດບູລິມະສິດ ຂອງຫວຽດນາມ; ຫວຽດນາມ ຍິນດີຮ່ວມກັບຈີນ ເພີ່ມທະວີການປະສານງານດ້ານຍຸດທະສາດ, ຊຸກຍູ້ການຮ່ວມມືໃນຂົງເຂດສໍາຄັນຕ່າງໆ ເຊັ່ນ: ການຄ້າ ແລະ ການລົງທຶນ, ວັດທະນະທໍາ-ສັງຄົມ ຕະຫຼອດຮອດການອໍານວຍຄວາມສະດວກໃນດ່ານຊາຍແດນຕ່າງໆ ໃຫ້ເຂົ້າສູ່ລວງເລິກຢ່າງບໍ່ຢຸດຢັ້ງ.

**3). ພັກກອມມູນິດກູບາ**

ວັນທີ 18 ກັນຍາ 2022, ທາງການກູບາ ໄດ້ແຈ້ງໃຫ້ປະຊາຊົນທີ່ອາໄສຢູ່ຕ່າງປະເທດ ພ້ອມກັນລົງປະຊາມະຕິຮັບຮອງເອົາປະມວນກົດໝາຍ ວ່າດ້ວຍ ຄອບຄົວ ສະບັບໃໝ່, ເຊິ່ງປະຊາຊົນກູບາ ທີ່ອາໄສຢູ່ ເວເນຊູເອລາ, ເປຣູ, ນິກາຣາກົວ, ໂກລົມບີ, ໂບລີວີ ແລະ ໃນປະເທດອື່ນໆ ໄດ້ພາກັນໄປໃຊ້ສິດ ຢູ່ສະຖານທູດ ແລະ ສະຖານກົງສຸນຂອງກູບາ ໃນບັນດາປະເທດດັ່ງກ່າວ. ສ່ວນ ການລົງປະຊາມະຕິພາຍໃນກູບາ ຈະຈັດຂຶ້ນ ໃນວັນທີ 25 ກັນຍາ 2022 ໃນ 168 ເມືອງ, 24,000 ໜ່ວຍລົງຄະແນນໃນທົ່ວປະເທດ.

**4). ການເລືອກຕັ້ງລັດຖະສະພາຊູແອັດ**

ວັນທີ 11 ກັນຍາ 2022, ຊູແອັດ ໄດ້ຈັດການເລືອກຕັ້ງລັດຖະສະພາຢ່າງເປັນທາງການ ເພື່ອເລືອກເອົາສະມາຊິກລັດຖະສະພາ 349 ຄົນ, ເຊິ່ງຜົນການເລືອກຕັ້ງ ແມ່ນ ພັກປະຊາທິປະໄຕຊູແອັດ (Swedwn Democrats) ເປັນພັກຝ່າຍຂວາຈັດ ຍຶດໝັ້ນລັດທິນາຊີໃໝ່, ມີນະໂຍບາຍຕ້ານຊາວອົບພະຍົບ ແລະ ຢາກໃຫ້ຊູແອັດ ອອກຈາກສະຫະພາບເອີລົບ ນໍາໂດຍ ທ່ານ Jimmie Akesson ຊະນະການເລືອກຕັ້ງ ຍາດໄດ້ 176 ບ່ອນນັ່ງໃນສະພາ, ເພີ່ມຂຶ້ນ 115 ບ່ອນນັ່ງ ຖ້າທຽບໃສ່ການເລືອກຕັ້ງໃນປີ 2018; ຮອງລົງມາແມ່ນ ພັກສັງຄົມປະຊາທິປະໄຕ (Swedish Socail Democrats) ນໍາໂດຍທ່ານ ນາງ Magdalena Andersson, ນາຍົກລັດຖະມົນຕີຊູແອັດ ຄົນປັດຈຸບັນ ໄດ້ 173 ບ່ອນນັ່ງໃນສະພາ ເພີ່ມຂຶ້ນ 73 ບ່ອນນັ່ງ. ທ່ານ ນາງ Magdalena Andersson ໄດ້ປະກາດຍອມຮັບຜົນການເລືອກຕັ້ງ, ພ້ອມທັງ ລາອອກຈາກຕໍາແໜ່ງນາຍົກລັດຖະມົນຕີ ເພື່ອໃຫ້ພັກ ທີ່ມີສຽງສ່ວນຫຼາຍ ໄດ້ເປັນນາຍົກຄົນໃໝ່ ແລະ ນໍາພາການຈັດຕັ້ງລັດຖະບານຊູແອັດ, ແຕ່ການນໍາພາການຈັດຕັ້ງລັດຖະບານປະສົມຂອງຊູແອັດ ຍັງປະເຊີນກັບຄວາມ

ຫຍຸ້ງຍາກຫຼາຍຢ່າງ, ເນື່ອງຈາກ ພັກເສລີ ປະກາດຈະບໍ່ຮ່ວມລັດຖະບານກັບພັກປະຊາທິປະໄຕຊູແອັດ, ຂະນະທີ່ ພັກສັງຄົມປະຊາທິປະໄຕ, ພັກຂອງ ລັດຖະບານຊູແອັດຊຸດກ່ອນ ໄດ້ປະກາດ ຍິນດີຮ່ວມກັບພັກຝ່າຍຂວາອື່ນໆ ຍົກເວັ້ນພັກປະຊາທິປະໄຕຊູແອັດ. ແນວໃດກໍດີ, ໃນວັນທີ 18 ກັນຍາ 2022, ພັກປະຊາທິປະໄຕຊູແອັດ ໄດ້ສະເໜີນະໂຍບາຍຫຼາຍກວ່າ 100 ຫົວຂໍ້ ໃນນັ້ນ ມີນະໂຍບາຍຕໍ່ຕ້ານຊາວອົບພະຍົບ, ຕໍ່ຕ້ານການຂໍທານ, ສົ່ງຜູ້ຮ້າຍຂ້າມແດນ ແລະ ອື່ນໆ.

## 2. ສະພາບການພາກພື້ນ ແລະ ສາກົນ

### 1) ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກາ

ບັນຫາພົ້ນເດັ່ນໃນຂົງເຂດນີ້ ແມ່ນການປະທະກັນ ຂອງບັນດາປະເທດໃນອາຊີກາງ ແລະ ບັນດາກອງປະຊຸມຫຼາຍຝ່າຍ ແລະ ບັນຫາພາຍໃນ ຂອງບາງປະເທດ.

- ວັນທີ 13/9/22, ໄດ້ມີການປະທະກັນຢ່າງຮຸນແຮງຄັ້ງໃໝ່ ລະຫວ່າງ ກອງກຳລັງອາກເມນີ ແລະ ອາແຊກໄບຊານ ໃນເຂດ Nagorno-Karabakh, ຊາຍແດນຂອງສອງປະເທດ, ເຊິ່ງຕ່າງຝ່າຍ ຕ່າງກ່າວໂທດກັນໄປມາ ວ່າເປັນຜູ້ກໍ່ຄວາມຮຸນແຮງກ່ອນ, ເຮັດໃຫ້ມີຜູ້ເສຍຊີວິດຢ່າງໜ້ອຍ 105 ຄົນ, ປັດຈຸບັນ ທັງສອງຝ່າຍ ໄດ້ຢຸດຍິງແລ້ວ. ເຂດ Nagorno-Karabakh ຖືກຮັບຮູ້ຢ່າງເປັນທາງການ ວ່າເປັນພາກສ່ວນໜຶ່ງຂອງອາແຊກໄບຊານ, ແຕ່ປະຊາຊົນສ່ວນໃຫຍ່ ແມ່ນຄົນອາກເມນີ. ການປະທະກັນທີ່ຮຸນແຮງທີ່ສຸດ ເກີດຂຶ້ນໃນປີ 2020, ທີ່ຕໍ່ສູ້ກັນ ເປັນເວລາ 44 ມື້, ເຮັດໃຫ້ມີຜູ້ເສຍຊີວິດ 6,500 ຄົນ, ແຕ່ການປະທະກັນ ໄດ້ສິ້ນສຸດລົງ ຍ້ອນລັດເຊຍ ເປັນຜູ້ຊ່ວຍເຈລະຈາ ແລະ ສົ່ງທະຫານ ເຂົ້າໄປຊ່ວຍຮັກສາຄວາມສະຫງົບໃນເຂດດັ່ງກ່າວ, ແຕ່ປັດຈຸບັນ ສອງປະເທດ ບໍ່ທັນມີສັນຍາສັນຕິພາບນຳກັນ, ມີພຽງສັນຍາຢຸດຍິງ ແຕ່ປີ 2020.

ລະຫວ່າງວັນທີ 14-16 ກັນຍາ 2022, ກຳລັງທະຫານຕາດຈິກິດສະຖານ ແລະ ກຽກກິດສະຖານ ກໍໄດ້ປະທະກັນ ຢູ່ເຂດ Batken ທາງພາກຕາເວັນອອກສຽງໃຕ້ຂອງກຽກກິດສະຖານ ທີ່ມີຄົນເຊື້ອສາຍຂອງຕາດຈິກິດສະຖານສ່ວນໃຫຍ່ ອາໄສຢູ່, ທາງການຕາດຈິກິດສະຖານ ໄດ້ກ່າວວ່າ ກຽກກິດສະຖານ ເປັນຜູ້ເລີ່ມການໂຈມຕີກ່ອນ ແລະ ມີການວາງແຜນໂຈມຕີ, ເຮັດໃຫ້ທະຫານຕາດຈິກິດສະຖານ ເສຍຊີວິດຢ່າງໜ້ອຍ 35 ຄົນ ແລະ ເຈົ້າໜ້າທີ່ຂອງກຽກກິດສະຖານ ເສຍຊີວິດ 59 ຄົນ, ປະຊາຊົນ ປະມານ 137,000 ຄົນ ຕ້ອງໄດ້ອົບພະຍົບຈາກເຂດດັ່ງກ່າວ ໄປຍັງເຂດປອດໄພ. ແນວໃດກໍດີ, ໃນກອງປະຊຸມສຸດຍອດອົງການຮ່ວມມືຊຽງໄຮ ຫຼື SCO ຄັ້ງທີ 22 ທີ່ ປະເທດອຸດສະເບກິດສະຖານ, ປະທານາທິບໍດີ ຕາດຈິກິດສະຖານ ແລະ ກຽກກິດສະຖານ ໄດ້ປະຊຸມນອກຮອບ, ຕ່າງຝ່າຍ ຕ່າງເຫັນດີຈະແກ້ໄຂບັນຫາ ຜ່ານທາງການທູດ. ໃນວັນທີ 18 ກັນຍາ 2022 ຜ່ານມາ, ທ່ານ ປູຕິນ, ປະທານາທິບໍດີລັດເຊຍ ກໍໄດ້ລົມສາຍກັບປະທານາທິບໍດີທັງສອງ, ຮຽກຮ້ອງໃຫ້ສອງຝ່າຍ ປ້ອງກັນບໍ່ໃຫ້ເກີດສະຖານະການທີ່ຮຸນແຮງກວ່ານີ້ ແລະ ແກ້ໄຂສະຖານະການດ້ວຍສັນຕິວິທີ.

- ກອງປະຊຸມສຸດຍອດອົງການຮ່ວມມືຊຽງໄຮ ຄັ້ງທີ 22 ໄດ້ຈັດຂຶ້ນໃນວັນທີ 15-16 ກັນຍາ 2022 ທີ່ເມືອງ Samarkand ຂອງອຸດສະເບກິດສະຖານ (Uzbekistan) ໂດຍມີຜູ້ເຂົ້າຮ່ວມ ຈາກ 14 ປະເທດ ລວມທັງປະເທດສະມາຊິກ, ປະເທດສັງເກດການ ແລະ ແຂກພິເສດ. ກອງປະຊຸມ ໄດ້ລົງນາມຮັບຮອງຖະແຫຼງການ Samarkan Declaration ແລະ ອອກຖະແຫຼງການ ກ່ຽວກັບການປ້ອງກັນຄວາມໝັ້ນຄົງດ້ານເຄື່ອງອຸປະໂພກ-ບໍລິໂພກສາກົນ, ຄວາມໝັ້ນຄົງທາງດ້ານພະລັງງານສາກົນ ແລະ ການແກ້ໄຂບັນຫາການປ່ຽນແປງຂອງດິນຟ້າອາກາດ. ກອງປະຊຸມເຫັນດີຮັບເອົາ ອີຣານ ເປັນສະມາຊິກ SCO, ກອງປະຊຸມ ຍັງກະກຽມດຳເນີນການ ເພື່ອຮັບເອົາ ເບລາຣຸດຊີ ເປັນສະມາຊິກ SCO ໃນອານາຄົດ, ເຫັນດີໃຫ້ ເອຢິບ, ອາຣັບບີ ຊາອຸດິດ, ກາຕາ, ບາເຣນ, ມານດິວ, ສະຫະນະຄອນ ເອເມຣັດ ອາຣັບ, ກູເວດ ແລະ ມຽນມາ ເປັນປະເທດຄູ່ສົນທະນາໃໝ່. ໃນນັ້ນ, ທ່ານ ສີ ຈິ້ນຜິງ, ປະທານປະເທດ ສປ ຈີນ ໄດ້ຮຽກຮ້ອງ ໃຫ້ລັດເຊຍ ແລະ ສະມາຊິກ SCO ສະໜັບສະໜູນເຊິ່ງກັນ ແລະ ກັນ ໃນການປ້ອງກັນມະຫາອຳນາດຕ່າງປະເທດ ທີ່ຈະກະຕຸ້ນໃຫ້ເກີດການປະຕິວັດສີ ພາຍໃນປະເທດສະມາຊິກ, ສປ ຈີນ ຈະຝຶກອົບຮົມເຈົ້າໜ້າທີ່ດ້ານກົດໝາຍ ຈາກກຸ່ມປະເທດ SCO ຈຳນວນ 2.000 ຄົນ ໃນ 5 ປີ ຕໍ່ໜ້າ; ຈະຈັດຫາຜົດພັນທັນຍາຫານ ມູນຄ່າ 214 ລ້ານ ໂດລາສະຫະລັດ ແລະ ການຊ່ວຍເຫຼືອສຸກເສີນອື່ນໆ ໃຫ້ແກ່ປະເທດກຳລັງພັດທະນາ ແລະ ຍັງໄດ້ເຊີນຊວນປະເທດສະມາຊິກ ເຂົ້າຮ່ວມໂຄງການລິເລີ່ມຄວາມໝັ້ນຄົງໂລກ (GSI) ຂອງ ສປ ຈີນ ທີ່ໄດ້ນຳສະເໜີຄັ້ງທຳອິດໃນເດືອນ ເມສາ 2022 ຜ່ານມາ. ຂະນະທີ່, ການພົບປະນອກຮອບລະຫວ່າງສອງຜູ້ນຳ ສປ ຈີນ ແລະ ລັດເຊຍ, ທ່ານ ສີ ຈິ້ນຜິງ ໄດ້ກ່າວວ່າ ໃນການປະເຊີນໜ້າກັບການປ່ຽນແປງຄັ້ງໃຫຍ່ໃນໂລກ ແລະ ໃນປະຫວັດສາດ, ສປ ຈີນ ຈະເຮັດວຽກຮ່ວມກັບ ລັດເຊຍ ຢ່າງໃກ້ຊິດ ເພື່ອສ້າງສະຖຽນລະພາບ ໃນໂລກ. ສ່ວນທ່ານ ວລາດີເມຍ ປູຕິນ, ປະທານາທິບໍດີລັດເຊຍ ໄດ້ກ່າວວ່າ ລັດເຊຍ ສະໜັບສະໜູນຫຼັກການຈີນດຽວ ຢ່າງໝັ້ນຄົງ ແລະ ຊົມເຊີຍຈຸດຢືນທີ່ໜັກແໜ້ນຂອງ ສປ ຈີນ ໃນວິກິດການ ອູແກຣນ; ຮັບຮູ້ ແລະ ເຂົ້າໃຈຄວາມກັງວົນຂອງ ສປ ຈີນ ຕໍ່

ສະຖານະການໃນ ອູແກຣນ. ສ່ວນ ການພົບປະນອກຮອບລະຫວ່າງສອງຜູ້ນຳ ລັດເຊຍ ແລະ ອິນເດຍ, ທ່ານ ນາເຣນດຣາ ໂມດີ, ນາຍົກລັດຖະມົນຕີ ອິນເດຍ ໄດ້ກ່າວວ່າ ເວລານີ້ ບໍ່ແມ່ນເວລາສຳລັບການເຮັດສົງຄາມ, ແຕ່ເປັນເວລາຂອງປະຊາທິປະໄຕ, ການທູດ ແລະ ການເຈລະຈາ ເພື່ອສົ່ງເສີມສັນຕິພາບຮ່ວມກັນ. ທ່ານ ປູຕິນ ໄດ້ກ່າວວ່າ ລັດເຊຍ ຮັບຊາບ ແລະ ເຂົ້າໃຈເປັນຢ່າງດີຕໍ່ທ່າທີຂອງ ອິນເດຍ ກ່ຽວກັບສະຖານະການໃນອູແກຣນ; ລັດເຊຍ ພ້ອມດຳເນີນການຢ່າງສຸດຄວາມສາມາດ ເພື່ອຢຸດຕິບັນຫານີ້ໂດຍໄວ ແລະວ່າ ຜ່ານມາ ແມ່ນຝ່າຍອູແກຣນ ເປັນຜູ້ປະຕິເສດການຈະເຈລະຈາ.

- ພາຍຫຼັງ ລັດຖະບານອາເມລິກາ ໄດ້ປະກາດຂອບການຮ່ວມມືເສດຖະກິດອິນໂດ-ປາຊີຟິກ (Indo-Pacific Economic Framework ຫຼື IPEF) ໃນເດືອນພຶດສະພາ 2022 ຜ່ານມາ, ວັນທີ 9 ກັນຍາ 2022, IPEF ໄດ້ຈັດກອງປະຊຸມຂັ້ນລັດຖະມົນຕີເສດຖະກິດ ຄັ້ງທຳອິດຂຶ້ນ ທີ່ Los Angeles, ລັດຄາລີຟໍເນຍ, ສະຫະລັດອາເມລິກາ, ໂດຍມີຜູ້ແທນຈາກ 14 ປະເທດ IPEF ເຂົ້າຮ່ວມ ຄື: ອາເມລິກາ, ອົດສະຕຣາລີ, ອິນເດຍ, ບຣູໄນ, ອິນໂດເນເຊຍ, ຍີ່ປຸ່ນ, ສ. ເກົາຫຼີ, ມາເລເຊຍ, ນິວຊີແລນ, ຟີຈີ, ຟີລິບປິນ, ສິງກະໂປ, ໄທ ແລະ ຫວຽດນາມ. ກອງປະຊຸມ ໄດ້ຮ່າງບັນດາມາດຕະຖານທີ່ເປັນພື້ນຖານ ຕາມ 4 ເສົາຄ້ຳ ຂອງຂອບ IPEF (ເສດຖະກິດເຊື່ອມຈອດການຄ້າຮ່ວມກັນ; ເສດຖະກິດທີ່ມີຄວາມໝຽວແໜ້ນ ໃນນັ້ນ ກວມເອົາ ການສ້າງຄວາມເຂັ້ມແຂງດ້ານຕ່ອງໂສ້ອາຫານ; ເສດຖະກິດສະອາດ; ເສດຖະກິດທີ່ຍຸດຕິທຳ, ຊຶ່ງຕິດພັນກັບມາດຕະການສະກັດກັ້ນການສໍ້ລາດບັງຫຼວງ), ໂດຍສະເພາະແມ່ນບັນດາມາດຖານ ການຄ້າ ແລະ ຕ່ອງໂສ້ອາຫານ ເພື່ອຕອບສະໜອງຄວາມພະຍາຍາມໃນການສ້າງຂອບການຄ້າໃໝ່ກັບບັນດາປະເທດໃນອາຊີ. ແຕ່ກອງປະຊຸມຄັ້ງນີ້ ບໍ່ທັນໄດ້ຮັບຮອງຫຍັງ, ເປັນພຽງພື້ນຖານ ເພື່ອນຳໄປອະພິປາຍຮ່ວມກັນ ໃນອະນາຄົດ. ວັນທີ 10 ກັນຍາ 2022, ກະຊວງອຸດສາຫະກຳການຄ້າອິນເດຍ ໄດ້ປະກາດຖອນອອກຈາກການເຈລະຈາຂອງ IPEF ເປັນການຊົ່ວຄາວ ດ້ວຍເຫດຜົນ ບໍ່ທັນເຫັນຜົນປະໂຫຍດຫຍັງ ຈາກຂອບການຮ່ວມມືດັ່ງກ່າວ.

- ວັນທີ 19 ກັນຍາ 2022, ທ່ານ Yang Jiechi, ກຳມະການກົມການເມືອງສູນກາງພັກກອມມູນິດຈີນ, ຫົວໜ້າຫ້ອງການຄະນະກຳມາທິການຕ່າງປະເທດຂອງພັກກອມມູນິດຈີນ ໄດ້ເປັນປະທານຮ່ວມກັບ ທ່ານ Nikolai Patrushev, ເລຂາທິການຄະນະມົນຕີຄວາມໝັ້ນຄົງແຫ່ງສະຫະພັນລັດເຊຍ ປຶກສາຫາລືກ່ຽວກັບຄວາມໝັ້ນຄົງລະຫວ່າງ ສປ ຈີນ ແລະ ລັດເຊຍ ຄັ້ງທີ 17, ທີ່ແຂວງຟູຈ້ຽນ, ທາງພາກຕາເວັນອອກຂອງ ສປ ຈີນ ທີ່ຕັ້ງຢູ່ກົງກັນຂ້າມກັບຊ່ອງແຄບໄຕຫວັນ. ໃນສະພາບການໂລກ ທີ່ມີຄວາມຫຍຸ້ງຍາກ, ສອງຝ່າຍ ໄດ້ຢັ້ງຢືນການສະໜັບສະໜູນ ແລະ ຊ່ວຍເຫຼືອເຊິ່ງກັນແລະກັນ, ເຫັນດີນຳເອົາຜົນຂອງການພົບປະຮອບນອກຂອງຜູ້ນຳສອງປະເທດໃນລະຫວ່າງກອງປະຊຸມສຸດຍອດ SCO ຄັ້ງທີ 22 ທີ່ ອຸດສະເບກິດສະຖານ ໄປຈັດຕັ້ງຜັນຂະຫຍາຍ; ເພີ່ມຄວາມໄວ້ວາງໃຈ, ສະໜັບສະໜູນເຊິ່ງກັນແລະກັນ ໃນການພັດທະນາ ທີ່ສອດຄ່ອງກັບຄວາມເປັນຈິງຂອງແຕ່ລະປະເທດ, ຮ່ວມກັນສົ່ງເສີມສັນຕິພາບຂອງໂລກ ແລະ ຍົກສູງການເປັນຄູ່ຮ່ວມມືຍຸດທະສາດຮອບດ້ານຂອງສອງປະເທດ ໃຫ້ນັບມື້ນັບເຂັ້ມແຂງ ແລະ ເຂົ້າສູ່ລວງເລິກກວ່າເກົ່າ. ໃນນັ້ນ, ລັດເຊຍ ໄດ້ຢ້ຳຄືນສະໜັບສະໜັບຄວາມພະຍາຍາມຂອງ ສປ ຈີນ ໃນການປົກປ້ອງຜືນແຜ່ນດິນ ແລະ ອະທິປະໄຕອັນຄົບຖ້ວນຂອງ ສປ ຈີນ.

- ສະພາບພາຍໃນສີລັງກາ: ນັບແຕ່ ວັນທີ 13/7/2022, ທ່ານ Gotabaya Rajapaksa, ອະດີດປະທານາທິບໍດີສີລັງກາ ແລະ ພັນລະຍາ ໄດ້ຫຼົບໜີອອກນອກປະເທດ ຍ້ອນຖືກປະຊາຊົນຂັບໄລ່. ມາເຖິງວັນທີ 2/9/2022, ທ່ານ Gotabaya ແລະ ພັນລະຍາ ໄດ້ເດີນທາງກັບຄືນປະເທດ ຊຶ່ງເຮັດໃຫ້ປະຊາຊົນຈຳນວນຫຼາຍ ສະແດງຄວາມບໍ່ພໍໃຈ ແລະ ຮຽກຮ້ອງໃຫ້ລັດຖະບານດຳເນີນຄະດີຕໍ່ ທ່ານ Gotabaya ພ້ອມກັບອະດີດຄະນະລັດຖະບານຈຳນວນໜຶ່ງ. ປັດຈຸບັນ, ສີລັງກາ ໄດ້ບັນລຸຂໍ້ຕົກລົງກູ້ຢືມເງິນ 2,9 ຕື້ໂດລາສະຫະລັດ ກັບກອງທຶນການເງິນສາກົນ (IMF) ເພື່ອນຳໃຊ້ເຂົ້າໃນການຟື້ນຟູສະຖຽນລະພາບທາງດ້ານເສດຖະກິດຂອງສີລັງກາ ແຕ່ຕ້ອງຢູ່ພາຍໃຕ້ເງື່ອນໄຂເຊັ່ນ: ແກ້ໄຂບັນຫາໜີ້ສິນໄລຍະຍາວ, ຊຸກຍູ້ການເກັບລາຍຮັບຂອງລັດຖະບານ, ກຳນົດລາຄາເຊື້ອເພີງ ແລະ ໄຟຟ້າຄືນໃໝ່, ປະຕິຮູບຄືນການເກັບພາສີ, ສ້າງຄັງສຳຮອງເງິນຕາຕ່າງປະເທດຄືນໃໝ່ ແລະ ອື່ນໆ ເພື່ອແນໃສ່ເຮັດໃຫ້ສີລັງກາ ບັນລຸການເກີນດຸນຂັ້ນຕົ້ນ 2,3% ຂອງ GDP ພາຍໃນປີ 2024.

- ວັນທີ 17 ກັນຍາ 2022, ລັດຖະສະພາກາຊັກສະຖານໄດ້ມີມະຕິຮັບຮອງເອົາການດັດແກ້ກົດໝາຍຂະຫຍາຍເວລາການດຳລົງຕຳແໜ່ງຂອງປະທານາທິບໍດີກາຊັກສະຖານ ຈາກວາລະ 5 ປີ ມາເປັນ 7 ປີ, ແຕ່ຈຳກັດໃຫ້ດຳລົງຕຳແໜ່ງ ໄດ້ພຽງ 01 ສະໄໝ ຈາກທີ່ກ່ອນໜ້ານີ້ ສາມາດດຳລົງຕຳແໜ່ງ ໄດ້ 02 ສະໄໝ. ລັດຖະສະພາກາຊັກສະຖານ ຍັງໄດ້ຜ່ານຮ່າງກົດໝາຍອີກສະບັບໜຶ່ງເພື່ອກັບຄືນມານຳໃຊ້ຊື່ນະຄອນຫຼວງເກົ່າຂອງປະເທດ (Astana), ນັບແຕ່ປີ 1997-2019 ນະຄອນຫຼວງກາຊັກສະຖານ ແມ່ນ Astana, ແຕ່ໄດ້ປ່ຽນມາເອີ້ນວ່າ Nur-Sultan ໃນເດືອນ ມີນາ 2019 ຮອດປັດຈຸບັນເພື່ອເປັນກຽດໃຫ້ແກ່ ທ່ານອະດີດປະທານາທິບໍດີ Nursultan Nazarbayev ທີ່ໄດ້ລາອອກຈາກຕຳແໜ່ງ ພາຍຫຼັງປົກຄອງປະເທດມາດົນນານ 30 ປີ ແລະ ໃນວັນທີ 17 ກັນຍາ 2022 ຜ່ານມາ, ທ່ານ Kassym-Jomart Tokayev, ປະທານາທິບໍດີ ກາຊັກສະຖານ ຄືນ

ປັດຈຸບັນ ຈຶ່ງໄດ້ລົງນາມຮັບຮອງເອົາການດັດແກ້ກົດໝາຍທັງສອງສະບັບ ແລະ ມີການປະກາດໃຫ້ມີຜົນບັງຄັບໃຊ້ທັນທີ, ເປັນການປະຕິຮູບ ເພື່ອສ້າງມາດຖານໃໝ່ໃຫ້ກັບລະບົບການເມືອງຂອງ ກາຊັກສະຖານ ທີ່ຈະມີຄວາມຍຸຕິທຳ ແລະ ເປີດກວ້າງຢ່າງແທ້ຈິງ.

- ປາກິດສະຖານ: ວັນທີ 29/8/2022, ເກີດເຫດໄພພິບັດນ້ຳຖ້ວມຄັ້ງໃຫຍ່ ໃນຮອບ 30 ປີ ຢູ່ ປາກິດສະຖານ ເຮັດໃຫ້ປະຊາຊົນໄດ້ຮັບຜົນກະທົບຫຼາຍກວ່າ 33 ລ້ານຄົນ, ເສຍຊີວິດຫຼາຍກວ່າ 1.000 ຄົນ ກວມເອົາເນື້ອທີ່ 1/3 ຂອງ ປາກິດສະຖານ. ຄາດວ່າມູນຄ່າຄວາມເສຍຫາຍ ຫຼາຍກວ່າ 10 ຕື້ໂດລາສະຫະລັດ. ປັດຈຸບັນ, ກອງທຶນການເງິນສາກົນ (IMF) ໄດ້ມອບງົບປະມານຊ່ວຍເຫຼືອແກ່ປາກິດສະຖານ 1,1 ຕື້ໂດລາສະຫະລັດ ແລະ ເງິນກູ້ຢືມ 6 ຕື້ໂດລາສະຫະລັດ. ຂະນະທີ່, ສປຊ ອະນຸມັດງົບປະມານຊ່ວຍເຫຼືອແລ້ວ 160 ລ້ານໂດລາສະຫະລັດ ທີ່ປະກອບດ້ວຍອາຫານ ຢາປົວພະຍາດ, ທີ່ພັກຊົ່ວຄາວ ແລະ ອື່ນໆ. ພ້ອມດຽວກັນ, ບັນດາຜູ້ນຳທົ່ວໂລກ ໄດ້ສົ່ງສານສະແດງຄວາມເຫັນໃຈຕໍ່ໄພພິບັດທີ່ເກີດຂຶ້ນດັ່ງກ່າວ.

**2). ສະພາບການ ໃນຂົງເຂດເອີຣົບ-ອາເມຣິກາ**

ສະຖານະການໃນອູແກຣນ ຍັງສືບໄດ້ຮັບຄວາມສົນໃຈ ຈາກປະຊາຄົມໂລກ, ເຊິ່ງການເຄື່ອນໄຫວພົ້ນເດັ່ນໃນເດືອນ ກັນຍາ 2022 ແມ່ນການແລກປ່ຽນຊະເລີຍເສິກ ຈຳນວນ 215 ຄົນ ເປັນຄັ້ງທີ 2 ລະຫວ່າງອູແກຣນ ແລະ ລັດເຊຍ, ຄັ້ງທຳອິດ ໃນເດືອນ ກໍລະກົດ 2022 ແລກປ່ຽນຊະເລີຍເສິກ ຈຳນວນ 144 ຄົນ. ຂະນະທີ່ ຜູ້ນຳ ຂອງສາທາລະນະລັດ Luhansk, Donetsk, Kherson ແລະ Zaporizhia ໄດ້ເລີ່ມລົງປະຊາມະຕິມາຂຶ້ນກັບລັດເຊຍ ແຕ່ວັນທີ 23-27 ກັນຍາ 2022. ສ່ວນການໂຈມຕີຂອງສອງຝ່າຍ ໃນເດືອນນີ້ ສຸມໃສ່ການໂຈມຕີ ທາງພາກຕາເວັນອອກ ແລະ ທາງພາກໃຕ້ຂອງອູແກຣນ, ໂດຍກອງທັບອາກາດຂອງລັດເຊຍ ໄດ້ໃຊ້ອາວຸດນຳວິຖີຄວາມຊັດເຈນສູງ ໂຈມຕີເປົ້າໝາຍ ໃນພາກຕາເວັນອອກຂອງອູແກຣນ ສາມາດທຳລາຍລົດຫຸ້ມເກາະຂອງອູແກຣນ ໄດ້ 3 ຄັນ, ລົດຖັງ 48 ຄັນ ລົດຖະຫານ 46 ຄັນ, ລົດຕິດອາວຸດ 37 ຄັນ, ຍິງເຄື່ອງບິນອູແກຣນ ຕົກໃນເມືອງ Kherson, ທຳລາຍໂຮງງານແຫ່ງໜຶ່ງ ໃນເມືອງ Zaporizhia ທີ່ເປັນບ່ອນເກັບເຄື່ອງຍິງຈະຫຼວດ ໄຮມາສ ທີ່ອູແກຣນໄດ້ຮັບຈາກອາເມລິກາ, ຂະນະທີ່ອູແກຣນ ອ້າງວ່າ ສາມາດຢັບຢັ້ງການໂຈມຕີຂອງລັດເຊຍໃນຫຼາຍພື້ນທີ່ ລວມທັງສາມາດຂັດຂວາງການສ້າງລາງລົດໄຟ ເພື່ອໃຊ້ໃນການຂົນສົ່ງອາວຸດຂອງລັດເຊຍ ແລະ ອ້າງວ່າ ສາມາດຍຶດຄືນພື້ນທີ່ບາງສ່ວນໃນເມືອງ Kharkhov ໃນພາກຕາເວັນອອກ ແລະ ເມືອງ Kherson ທາງພາກໃຕ້ ຈາກລັດເຊຍ ໄດ້ທັງໝົດ 8,000 ຕາລາງກິໂລແມັດ. ສ່ວນສາທາລະນະລັດ Luhansk ແລະ Donetsk ແລະ ເມືອງ Mariuppol ໃນພາກຕາເວັນອອກຂອງອູແກຣນ ຍັງຢູ່ໃນການຄວບຄຸມຂອງລັດເຊຍທັງໝົດ. ຫຼ້າສຸດ, ປະທານາທິບໍດີ ປູຕິນ ໄດ້ລົງນາມການລະດົມກຳລັງທະຫານສຳຮອງພາຍໃນປະເທດ ແລະ ຄົນຕ່າງປະເທດທີ່ສະໜັບສະໜູນລັດເຊຍ ອີກ 300,000 ຄົນ ເພື່ອຮັບມືກັບທຸກສະຖານະການ ບໍ່ສະເພາະແຕ່ສະຖານະການໃນອູແກຣນເທົ່ານັ້ນ ໂດຍລະດົມເອົາຜູ້ທີ່ມີປະສົບການດ້ານການທະຫານ ແລະ ຈະຝຶກຝົນວິຊາໃຫ້ກຳລັງເຫຼົ່ານັ້ນຕື່ມອີກ ກ່ອນຈະຖືກສົ່ງໄປປະຕິບັດການທາງທະຫານໃດໜຶ່ງ. ສ່ວນ ຕາເວັນຕົກ ຍັງສືບຕໍ່ໃຫ້ການຊ່ວຍເຫຼືອອູແກຣນ, ວັນທີ 20 ກັນຍາ 2022, ນາຍົກລັດຖະມົນຕີຄົນໃໝ່ຂອງອັງກິດ, Liz Truss, ໄດ້ປະກາດຈະຊ່ວຍເຫຼືອອູແກຣນ ໃນປີ 2023 ຈຳນວນ 2.63 ຕື້ໂດລາສະຫະລັດເພື່ອຕໍ່ສູ້ກັບລັດເຊຍ, ອາເມລິກາ ສົ່ງອາວຸດໃຫ້ ອູແກຣນ ເພີ່ມຕື່ມ ມູນຄ່າ 2,98 ຕື້ໂດລາສະຫະລັດ ທີ່ລວມມີ ລູກສອນໄຟ HIMARS, stringer, Javelin, ປືນຄົກ M777 ແລະ ໂດຣນ, ປັດຈຸບັນ, ອາເມລິກາ ຊ່ວຍເຫຼືອທາງການທະຫານໃຫ້ ອູແກຣນ ຫຼາຍກວ່າ 13,58 ຕື້ໂດລາສະຫະລັດ. ວັນທີ 10 ກັນຍາ 2022, ທ່ານ ນາງ Annalena Baerback, ລັດຖະມົນຕີຕ່າງປະເທດເຢຍລະມັນ ກໍໄດ້ໄດ້ເດີນທາງຢ້ຽມຢາມອູແກຣນ ເພື່ອຢ້ຳຄືນການສະໜັບສະໜູນອູແກຣນ ແລະ ຈະສືບຕໍ່ສະໜອງອາວຸດ, ງົບປະມານ ແລະ ການຊ່ວຍເຫຼືອທາງດ້ານມະນຸດສະທຳໃຫ້ແກ່ ອູແກຣນ.

ສະພາບພາຍໃນລາຊະອານາຈັກອັງກິດ: ພາຍຫຼັງທ່ານ Boris Johnson ໄດ້ລາອອກຈາກຕຳແໜ່ງຫົວໜ້າພັກອະນຸລັກນິຍົມ ແລະ ຕຳແໜ່ງນາຍົກລັດຖະມົນຕີອັງກິດ ໃນວັນທີ 7/7/2022 ຜ່ານມາ, ວັນທີ 5/9/2022, ທ່ານ ນ. Liz Truss, ລັດຖະມົນຕີຕ່າງປະເທດອັງກິດ ໄດ້ຖືກເລືອກເປັນຫົວໜ້າພັກອະນຸລັກນິຍົມ ແລະ ເປັນນາຍົກລັດຖະມົນຕີຄົນໃໝ່, ເປັນນາຍົກລັດຖະມົນຕີຍິງ ຄົນທີ 3 ຂອງອັງກິດ, ຊຶ່ງເອົາຊະນະ ທ່ານ Rishi Sunak, ອະດີດລັດຖະມົນຕີກະຊວງການເງິນ ດ້ວຍຄະແນນສຽງ 81.326 ຄະແນນ ຕໍ່ 60.399 ຄະແນນ ຈາກທັງໝົດ 142.000 ຄະແນນ. ຜົນສຳຫຼວດປະຊາຊົນອັງກິດຈຳນວນໜຶ່ງ ບໍ່ເຊື່ອໝັ້ນຕໍ່ນະໂຍບາຍພາຍໃຕ້ການນຳພາຂອງ ທ່ານ ນ. Truss ກໍຄືການນຳພາຂອງພັກອະນຸລັກນິຍົມ ເພາະຕະຫຼອດໄລຍະຜ່ານມາຮອດປັດຈຸບັນ, ພັກອະນຸລັກນິຍົມ ບໍ່

ສາມາດແກ້ໄຂບັນຫາຂາດແຄນພະລັງງານ, ຄ່າຄອງຊີບ ແລະ ອັດຕາເງິນເຟີ້. ຂະນະດຽວກັນ, ທ່ານ ນາງ Priti Patel ລັດຖະມົນຕີກະຊວງພາຍໃນອັງກິດ ໄດ້ລາອອກຈາກຕຳແໜ່ງ ຍ້ອນບໍ່ເຊື່ອໝັ້ນຕໍ່ການນຳພາຂອງ ທ່ານ ນ. Truss ແລະ ໄດ້ມີປະຊາຊົນຈຳນວນໜຶ່ງ ລວມກັນປະທ້ວງ ບໍ່ຍອມຮັບ ທ່ານ ນາງ ລິສ ທຣັສ ແລະ ຕໍ່ຕ້ານການບໍລິຫານງານລັດຖະບານ ຂອງພັກອະນຸລັກນິຍົມ, ທັງຮຽກຮ້ອງໃຫ້ມີການເລືອກຕັ້ງກ່ອນກຳນົດ, ຂະນະທີ່ ທ່ານ ນາງ ລິສ ທຣັສ ໃຫ້ສັນຍາວ່າ ຈະສືບຕໍ່ບໍລິຫານປະເທດ ຈົນກວ່າຈະຄົບວາລະ ໃນປີ 2024, ທັງໄດ້ປະກາດແຕ່ງຕັ້ງລັດຖະບານຊຸດໃໝ່ຄື: ທ່ານ ນ. Therese Coffey, ເປັນຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີກະຊວງສາທາລະນະສຸກ; ທ່ານ Kwasi Kwartey, ເປັນລັດຖະມົນຕີກະຊວງການເງິນ; ທ່ານ James Cleverly, ເປັນລັດຖະມົນຕີກະຊວງຕ່າງປະເທດ; ທ່ານ ນ. Suella Braverman, ເປັນລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ແລະ ທ່ານ Ben Wallace, ເປັນລັດຖະມົນຕີກະຊວງປ້ອງກັນປະເທດ. ທ່ານ ນ. Truss ໄດ້ມີຄຳເຫັນນະໂຍບາຍລວມ ຈະແກ້ໄຂບັນຫາທາງດ້ານເສດຖະກິດ, ບັນຫາຂາດແຄນພະລັງງານ, ຫຼຸດຜ່ອນໄພເງິນເຟີ້, ພາສີ, ຄ່າຄອງຊີບ, ດຳເນີນມາດຕະການທີ່ເຂັ້ມງວດກັບ ສປ ຈີນ, ສືບຕໍ່ແກ້ໄຂບັນຫາທີ່ເກີດຂຶ້ນພາຍຫຼັງ Brexit ແລະ ການປັບປຸງລະບົບການບໍລິການສາທາລະນະໃຫ້ດີຂຶ້ນ. ນະໂຍບາຍຕໍ່ລັດເຊຍ, ອັງກິດຈະສືບຕໍ່ສະໜັບສະໜັບສະໜູນ ອູແກຣນ ເພື່ອຕ້ານກັບລັດເຊຍ.

ວັນທີ 5-9/9/2022, ລັດເຊຍ ໄດ້ເປັນເຈົ້າພາບຈັດກອງປະຊຸມເສດຖະກິດໃນພາກພື້ນຕາເວັນອອກ (EEF) ຄັ້ງທີ 7 ທີ່ເມືອງ Vladivostok ພາຍໃຕ້ຫົວຂໍ້: ການກ້າວໄປສູ່ໂລກຫຼາຍຂົ້ວ (On the Path to a Multipolar World) ຊຶ່ງມີຄະນະຜູ້ແທນເຂົ້າຮ່ວມຫຼາຍກວ່າ 4,000 ຄົນ ຈາກ 60 ປະເທດເຊັ່ນ: ສປ ຈີນ, ອິນເດຍ, ຍີ່ປຸ່ນ, ສ. ເກົາຫຼີ, ມຽນມາ, ກາຊັກສະຖານ ແລະ ປະເທດອື່ນໆ. ກອງປະຊຸມຄັ້ງນີ້ ເປັນເວທີສົ່ງເສີມການລົງທຶນລະຫວ່າງລັດເຊຍ ແລະ ສາກົນ ຂະຫຍາຍການຮ່ວມມືລະຫວ່າງບັນດາປະເທດໃນພາກພື້ນອາຊີ-ປາຊີຟິກ, ຈະສາມາດສ້າງໂຄງການລົງທຶນໄດ້ຫຼາຍກວ່າ 2,700 ໂຄງການ, ສ້າງວຽກເຮັດງານທຳໄດ້ 120,000 ຕຳແໜ່ງ.

**3). ກອງປະຊຸມສະມັດຊາໃຫຍ່ສະຫະປະຊາຊາດ (UNGA)**

ກອງປະຊຸມສະມັດຊາໃຫຍ່ ສປຊ ສະໄໝທີ 77 ໄດຈັດຂຶ້ນໃນລະຫວ່າງວັນທີ 13-26 ກັນຍາ 2022 ທີ່ສຳນັກງານໃຫຍ່ ສປຊ, ນະຄອນນິວຢອກ, ສະຫະລັດອາເມລິກາ ໂດຍການເປັນປະທານຂອງ ທ່ານ ຈາບາ ໂກໂຣຊີ (CSABA KŐRÖSI), ປະທານສະມັດຊາໃຫຍ່ ສປຊ ສະໄໝ ທີ 77 ດຳເນີນພາຍໃຕ້ຫົວຂໍ້ "ບາດລ້ຽວສຳຄັນແຫ່ງຍຸກສະໄໝ: ວິທີທາງແບບຫັນປ່ຽນໃໝ່ໃນການແກ້ໄຂບັນດາສິ່ງທ້າທາຍທີ່ເກາະກ່ຽວກັນ" (A watershed moment: transformative solutions to interlocking challenges) ໂດຍມີຜູ້ແທນລະດັບປະມຸກລັດ, ຫົວໜ້າລັດຖະບານຫຼາຍກວ່າ 150 ທ່ານ, ລະດັບຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີຕ່າງປະເທດລົງມາ 40 ກວ່າທ່ານ ຈາກປະເທດສະມາຊິກ ສປຊ ທັງໝົດ 193 ປະເທດ ເຂົ້າຮ່ວມ. ໃນກອງປະຊຸມ, ແຕ່ລະປະເທດໄດ້ຜັດປ່ຽນກັນຂຶ້ນກ່າວປາໄສ ເພື່ອສະແດງທັດສະນະ ແລະ ວິໄສທັດຂອງປະເທດຕົນ ຕໍ່ກັບບັນຫາສຳຄັນຕ່າງໆຂອງໂລກ ເຊັ່ນ: ບັນຫາສັນຕິພາບ ແລະ ຄວາມໝັ້ນຄົງສາກົນ, ການລຶບລ້າງຄວາມທຸກຍາກ; ການເລັ່ງລັດຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ, ຄວາມບໍ່ໝັ້ນຄົງດ້ານສະບຽງອາຫານ ແລະ ພະລັງງານໂລກ; ການຮ່ວມມືເພື່ອສະກັດກັ້ນ ແລະ ຮັບມືກັບຜົນກະທົບໂຄວິດ-19 ແລະ ຟື້ນຟູເສດຖະກິດພາຍຫຼັງການລະບາດຂອງພະຍາດດັ່ງກ່າວ; ການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ; ຂໍ້ຂັດແຍ່ງທາງດ້ານການຄ້າ ແລະ ການທະຫານ ແລະ ບັນຫາອື່ນໆ. ໃນໂອກາດນີ້, ທ່ານ ອັນໂຕນີໂອ ກູເຕເຣສ (António Guterres), ເລຂາທິການໃຫຍ່ ອົງການ ສປຊ ໄດ້ມີຄຳເຫັນຕໍ່ກອງປະຊຸມ ວ່າ: ປະຊາຄົມໂລກ ພວມສືບຕໍ່ປະເຊີນໜ້າກັບສິ່ງທ້າຍທາຍຫຼາຍຢ່າງໃນປັດຈຸບັນ, ບັນດາປະເທດສະມາຊິກ ຈຳເປັນຕ້ອງເພີ່ມທະວີຄວາມພະຍາຍາມໃນການຊອກຫຼາຍວິທີທາງແກ້ໄຂບັນຫາຢ່າງສັນຕິວິທີ ໃນຮູບແບບການປຶກສາຫາລື, ການເຈລະຈາ ແລະ ການນຳໃຊ້ການທູດ.

**3). ສະພາບການ ໃນຕາເວັນອອກກາງ**

ສະພາບພາຍໃນອີຣັກ: ນັບຕັ້ງແຕ່ ທ່ານ al-Sard, ຜູ້ນຳສາສະໜານິກາຍຊີອະ ໄດ້ຮັບໄຊຊະນະໃນການເລືອກຕັ້ງສະພາໃນເດືອນຕຸລາ 2021 ເປັນຕົ້ນມາ, ໄດ້ພະຍາຍາມນຳພາຈັດຕັ້ງລັດຖະບານອີຣັກແຕ່ບໍ່ປະສົບຜົນສຳເລັດ. ມາເຖິງວັນທີ 29/8/2022, ທ່ານ al-Sard ໄດ້ປະກາດຢຸດຕິການເຄື່ອນໄຫວທາງການເມືອງ ແລະ ໄດ້ເຂົ້າຮ່ວມກັບຜູ້ປະທ້ວງ ເພື່ອຮຽກຮ້ອງໃຫ້ມີການເລືອກຕັ້ງຄືນໃໝ່ ແລະ ປະທ້ວງບໍ່ຍອມຮັບຕໍ່ການສະເໜີຊື່ນາຍົກລັດຖະມົນຕີຄົນໃໝ່ຂອງພັກຮ່ວມລັດຖະບານ ຊຶ່ງກຸ່ມຜູ້ປະທ້ວງໄດ້ບຸກເຂົ້າໄປເຂດ Green Zone ຢູ່ ນະຄອນຫຼວງແບກແດດ ທີ່ເປັນທີ່ຕັ້ງຂອງສຳນັກງານລັດ, ສະຖານທູດ ເຮັດໃຫ້ມີການປະທະກັນ ຊຶ່ງມີຜູ້ເສຍຊີວິດຫຼາຍກວ່າ 30 ຄົນ, ບາດເຈັບຫຼາຍກວ່າ 500 ຄົນ ທາງການອີຣັກ ຕ້ອງໄດ້ປະກາດພາວະສຸກເສີນໄປຈົນເຖິງວັນທີ 6/9/2022. ຂະນະທີ່, ສປຊ ໄດ້ຮຽກຮ້ອງໃຫ້ທຸກຝ່າຍຢຸດຕິການກະທຳຕ່າງໆທີ່ຈະເຮັດໃຫ້ສະຖານະການເພີ່ມທະວີຄວາມຮຸນແຮງຍິ່ງຂຶ້ນ.

**ແຫຼ່ງຂ່າວອ້າງອີງ** :Vietnam News, Vietnam- Express, VNS, Xinhua, CNA, Global Times, Yonhap, CRI, RT, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, TNN, Thai TBS, Top news, ກະຊວງການຕ່າງປະເທດລາວ, ກົມ ອປອ ຄຕພ, ກົມ ອອ ຄຕພ.

# II. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

## 1. ຫົວໜ້າ ຄຕພ ຕ້ອນຮັບການເຂົ້າຢ້ຽມຂ່ຳນັບ ຂອງ ສະຫາຍ ເຮຣາໂດ ເປຢາເວ ປອດຕານ, ຮອງລັດຖະມົນຕີຜູ້ທີໜຶ່ງ ກະຊວງການຕ່າງປະເທດກູບາ



ວັນທີ 05 ກັນຍາ 2022, ທີ່ສຳນັກງານ ຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນ ປະຕິວັດລາວ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງ ສະຫາຍ ເຮຣາໂດ ເປຢາເວ ປອດຕານ, ຮອງລັດຖະມົນຕີຜູ້ທີໜຶ່ງ ກະຊວງການຕ່າງປະເທດກູບາ ພ້ອມດ້ວຍຄະນະ. ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ການຢ້ຽມຢາມ ສປປ ລາວ ຂອງຄະນະໃນຄັ້ງນີ້, ເປັນການປະກອບສ່ວນອັນສຳຄັນເຂົ້າໃນການເພີ່ມພູນຄູນສ້າງ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ກູບາ ໃຫ້ແໜ້ນແຟ້ນຍິ່ງໆຂຶ້ນ; ໄດ້ແຈ້ງໃຫ້ຊາບໂດຍຫຍໍ້ ກ່ຽວກັບຜົນສຳເລັດໃນການສ້າງສາພັດທະນາປະເທດຊາດ ຢູ່ ສປປ ລາວ ໃນຊຸມປີຜ່ານມາ ແລະ ທິດທາງແຜນພັດທະນາ ສປປ ລາວ ໃນຊຸມປີຕໍ່ໜ້າ; ຕີລາຄາສູງມູນເຊື້ອການຮ່ວມມືລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ, ສະແດງຄວາມຂອບໃຈຢ່າງຈິງໃຈ ຕໍ່ການສະໜັບສະໜູນ ແລະ ຊ່ວຍເຫຼືອຂອງພັກ, ລັດ ແລະ ປະຊາຊົນກູບາອ້າຍນ້ອງ ໃນພາລະກິດຕໍ່ສູ້ກູ້ຊາດໃນເມື່ອກ່ອນ ກໍ່ຄືພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດຂອງ ສປປ ລາວ ໃນປັດຈຸບັນ; ສະແດງຄວາມຊົມເຊີຍ ຕໍ່ບັນດາຜົນສຳເລັດຂອງກູບາ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໂດຍສະເພາະແມ່ນການພັດທະນາເສດຖະກິດ-ສັງຄົມ, ສືບຕໍ່ປົກປັກຮັກສາໝາກຜົນຂອງການປະຕິວັດໄວ້ຢ່າງໝັ້ນຄົງ ຕະຫຼອດໄລຍະ 60 ກວ່າປີທ່າມກາງການປິດລ້ອມຂອງຕາເວັນຕົກ ແລະ ສືບຕໍ່ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ 8 ຂອງພັກ ໃຫ້ປະກົດຜົນເປັນຈິງ.

## 2. ພິທີປະດັບຫຼຽນໄຊສາມັກຄີ ຈາກລັດຖະບານ ສ.ກູບາ ແລະ ຫຼຽນກາລະນຶກ 60 ປີ




ວັນທີ 4 ກັນຍາ 2022, ທີ່ຫໍສະພາແຫ່ງຊາດ, ສະມາຄົມມິດຕະພາບ ລາວ-ກູບາ ໄດ້ມີພິທີມອບຫຼຽນໄຊສາມັກຄີ ຈາກລັດຖະບານ ສ.ກູບາ ແລະ ຫຼຽນກາລະນຶກ 60 ປີ ຈາກສະຖາບັນກູບາເພື່ອມິດຕະພາບກັບນາໆຊາດ (ICAP) ໃຫ້ແກ່ ສະມາຄົມມິດຕະພາບ ລາວ-ກູບາ. ຕາງໜ້າລັດຖະບານ ສ.ກູບາ ແລະ ສະຖາບັນກູບາເພື່ອມິດຕະພາບກັບນາໆຊາດ ມອບໂດຍ ສະຫາຍ ເກີຣາໂດ ເປນາລເວ ປໍຕາລ (Gerardo penalver portal), ຮອງລັດຖະມົນຕີກະຊວງການຕ່າງປະເທດ ຜູ້ທີ 1 ແຫ່ງ ສ.ກູບາ ແລະ ຕາງໜ້າຄະນະບໍລິຫານສະມາຄົມມິດຕະພາບຕະພາບ ລາວ-ກູບາ ຮັບໂດຍ ສະຫາຍ ສຈ.ປອ ຈະເລີນ ເຢຍປາວເຮີ, ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານສະມາຄົມມິດຕະພາບ ລາວ-ກູບາ. ໃຫ້ກຽດເຂົ້າຮ່ວມໃນພິທີອັນມີຄວາມໝາຍສຳຄັນດັ່ງກ່າວມີ: ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ນາງ ເອັນນາ ເອເທີ ວຽງ ວາລເດສ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສ.ກູບາ ປະຈຳ ສປປ ລາວ, ບັນດາຮອງລັດຖະມົນຕີ ເຂົ້າຮ່ວມ.

ການມອບຫຼຽນໄຊສາມັກຄີ ເຊິ່ງເປັນຫຼຽນທີ່ສູງສົ່ງ ຂອງ ສ. ກູບາ ແລະ ຫຼຽນກາລະນຶກ 60 ປີ ໃຫ້ແກ່ສະມາຄົມມິດຕະພາບ ລາວ-ກູບາ ສະແດງເຖິງການຍ້ອງຍໍສັນລະເສີນ ແລະ ຕີລາຄາສູງຕໍ່ການສະໜັບສະໜູນ ແລະ ເຄື່ອນໄຫວປະກອບສ່ວນ ຂອງ ສະມາຄົມມິດຕະພາບ ລາວ-ກູບາ ໃນການຕໍ່ສູ້ເພື່ອທວງເອົາຄວາມເປັນທຳໃຫ້ແກ່ປະຊາຊົນ ກູບາ ຢູ່ໃນເວທີພາກພື້ນ ແລະ ສາກົນ. ເຊິ່ງ, ສະຫາຍ ສຈ.ປອ ຈະເລີນ ເຢຍປາວເຮີ, ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານສະມາຄົມມິດຕະພາບ ລາວ-ກູບາ ໄດ້ຕາງໜ້າໃຫ້ຄະນະບໍລິຫານງານສະມາຄົມມິດຕະພາບ ລາວ-ກູບາ ສະແດງຄວາມຂອບໃຈ ແລະ ຢືນຢັນຈະສືບຕໍ່ສະໜັບສະໜູນ ແລະ ຊ່ວຍເຫຼືອຢ່າງສຸດຄວາມສາມາດຂອງຕົນ ຮ່ວມກັບສະຫາຍກູບາ ໃນການຕໍ່ສູ້ທວງເອົາຄວາມຍຸຕິທຳ ຈາກອິດທິກຳລັງປໍລະປັກ ເພື່ອສິດທິໃນການສ້າງສາພັດທະນາດ້ວຍຕົນເອງ ຂອງສອງຊາດ ລາວ-ກູບາ, ພ້ອມກັນເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ການຮ່ວມມືຮອບດ້ານ ຂອງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ ແລະ ກູບາ ໃຫ້ແຕກດອກອອກຜົນ, ນຳເອົາຜົນປະໂຫຍດສູງສຸດ ມາສູ່ປະຊາຊົນຂອງສອງຊາດ.

### 3. ສະມາຄົມມິດຕະພາບ ລາວ-ສປປ ເກົາຫຼີ ຈັດພິທີປາຖະກະຖາ ວັນສະຖາປະນາ ສປປ ເກົາຫຼີ




ວັນທີ 06 ກັນຍາ 2022, ທີ່ສູນກາງສະຫະພັນກຳມະບານລາວ, ສະມາຄົມມິດຕະພາບລາວ - ສປປ ເກົາຫຼີ ແລະ ສູນກາງສະຫະພັນກຳມະບານລາວ ຮ່ວມກັບສະຖານເອກອັກຄະລັດຖະທູດແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ ໄດ້ຈັດພິທີປາຖະກະຖາເນື່ອງໃນໂອກາດວັນສະຖາປະນາ ສາທາລະນະລັດ ປະຊາຊົນ ປະຊາທິປະໄຕ ເກົາຫຼີ ຄົບຮອບ 74 ປີ (9/9/1948 – 9/9/2022); ມີຜູ້ຕາງໜ້າຈາກສະຖານເອກອັກຄະລັດຖະທູດ ແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ, ການນຳ ແລະ ພະນັກງານລາວ ຈາກຂະແໜງການຕ່າງໆ 200 ກວ່າຄົນເຂົ້າຮ່ວມ. ພິທີດັ່ງກ່າວ, ມີການວາງສະແດງຮູບພາບ, ສາຍວີດີໂອ, ສະແດງສິລະປະຂອງສປປ ເກົາຫຼີ ແລະ ປາຖະກະຖາກ່ຽວກັບຜົນງານມູນເຊື້ອການຕໍ່ສູ້ພາຍໃຕ້ການນຳພາຂອງພັກແຮງງານເກົາຫຼີໃນໄລຍະຜ່ານມາ ແລະ ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ສປປ ເກົາຫຼີໃນປັດຈຸບັນ.

ໃນໂອກາດດັ່ງກ່າວ, ສະຫາຍ ລີ ຢອງໂຊນ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ ໄດ້ກ່າວເຖິງຜົນງານຂອງພັກແຮງງານເກົາຫຼີ, ລັດຖະບານ ແລະ ປະຊາຊົນ ສປປ ເກົາຫຼີ ພາຍໃຕ້ການຊີ້ນຳໆພາຂອງ ສະຫາຍ ກິມ ອິນ ຊຸງ, ສະຫາຍ ກິມ ເຈີງ ອິນ, ຜູ້ນຳທີ່ຍິ່ງໃຫຍ່, ປະທານປະເທດຕະຫຼອດການແຫ່ງ ສປປ ເກົາຫຼີ ແລະ ຜູ້ນຳພາແສງສະຫວ່າງແນວຄິດຈຸດເຊ່ ໃນພາລະກິດປະຕິວັດຂອງພັກ, ກຳລັງປະກອບອາວຸດ ແລະ ປະຊາຊົນ ສປປ ເກົາຫຼີ ໃນຂະບວນວິວັດແຫ່ງການຕໍ່ສູ້ປົດປ່ອຍຊາດກໍ່ຄືປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ສປປ ເກົາຫຼີ. ປັດຈຸບັນ ພາຍໃຕ້ການນຳພາຂອງ ສະຫາຍ ກິມ ເຈີງ ອຸນ, ຜູ້ນຳທີ່ເຄົາລົບຮັກ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ, ປະທານກິດຈະການແຫ່ງລັດແຫ່ງ ສປປ ເກົາຫຼີ, ຜູ້ບັນຊາການສູງສຸດກຳລັງປະກອບອາ ວຸດແຫ່ງ ສປປ ເກົາຫຼີ ອັນໄດ້ເຮັດໃຫ້ ສປປ ເກົາຫຼີ ມີການພັດທະນາຮອບດ້ານ, ການເມືອງມີສະຖຽນລະພາບໜັກແໜ້ນ, ວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບມີຄວາມເຂັ້ມແຂງທັນສະໄໝ, ເສດຖະກິດມີການພັດທະນາ, ຊີວິດການເປັນຢູ່ຂອງປະຊາຊົນ ສປປ ເກົາຫຼີໄດ້ຮັບການປັບປຸງດີຂຶ້ນເລື້ອຍໆ.

## 4. ຄະນະນຳ ຄຕພ ອວຍພອນ ທູດ ສປປ ເກົາຫຼີ ໂອກາດວັນສະຖາປະນາ ສປປ ເກົາຫຼີ ຄົບຮອບ 74 ປີ



ວັນທີ 07 ກັນຍາ 2022, ສະຫາຍ ວາລະໄຊ ເລັ່ງສະຫວັດ, ກຳມະການຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ນຳພາຄະນະ ໄປອວຍພອນ ສະຫາຍ ລີ ຢອງໂຊນ, ເອກອັກຄະລັດຖະທູດວິສາມັນ ຜູ້ມີອຳນາດເຕັມແຫ່ງ ສປປ ເກົາຫຼີ ປະຈຳ ສປປ ລາວ, ພ້ອມດ້ວຍພະນັກງານສະຖານທູດ ເນື່ອງໃນໂອກາດ ວັນສະຖາປະນາ ສປປ ເກົາຫຼີ ຄົບຮອບ 74 ປີ; ສະຫາຍ ວາລະໄຊ ເລັ່ງສະຫວັດ ໄດ້ສະແດງຄວາມຊົມເຊີຍຕໍ່ຜົນງານການນຳພາ ປົກປັກຮັກສາ ແລະ ສ້າງສາພັດທະນາຂອງ ສປປ ເກົາຫຼີ ພາຍໃຕ້ການນຳພາ-ຊີ້ນຳ ຂອງອະດີດຜູ້ນຳສູງສຸດ ສປປ ເກົາຫຼີ ກໍຄື ທ່ານ ກິມ ເຈີງອຸນ, ຜູ້ນຳປັດຈຸບັນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ ເຮັດໃຫ້ ສປປ ເກົາຫຼີ ສາມາດຜ່ານຜ່າຄວາມຫຍຸ້ງຍາກນາໆປະການ, ເສດຖະກິດ ສືບຕໍ່ຂະຫຍາຍຕົວຂຶ້ນຢ່າງບໍ່ຢຸດຢັ້ງ.

## 5. ຄຕພ ຈັດປາຖະກະຖາ ວັນສ້າງຕັ້ງສະຫະພັນນັກຮົບເກົ່າແຫ່ງຊາດລາວ ຄົບຮອບ 20 ປີ



ວັນທີ 15 ກັນຍາ 2022, ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດຕັ້ງເຜີຍແຜ່ມູນເຊື້ອວັນສ້າງຕັ້ງສະຫະພັນນັກຮົບເກົ່າແຫ່ງຊາດລາວ ຄົບຮອບ 20 ປີ (09 ກັນຍາ 2002 - 09 ກັນຍາ 2022) ໂດຍການເຂົ້າຮ່ວມຂອງ ສະຫາຍ ວາລະໄຊ ເລັ່ງສະຫວັດ, ກໍາມະການຄະນະພັກ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ໃຫ້ກຽດປາຖະກະຖາໂດຍ ສະຫາຍ ພົນຈັດຕະວາ ຄໍາໝັ້ນ ວັນນະວົງ, ຄະນະບໍລິຫານງານພັກ, ຮອງປະທານສະຫະພັນນັກຮົບເກົ່າແຫ່ງຊາດລາວ, ມີບັນດາສະຫາຍ ໃນຄະນະບໍລິຫານງານພັກ, ພະນັກງານອາວຸໂສບໍານານ ແລະ ພະນັກງານຫຼັກແຫຼ່ງທົ່ວຄະນະພົວພັນຕ່າງປະເທດສູນກາງພັກ ເຂົ້າຮ່ວມຢ່າງພ້ອມພຽງ. ສະຫາຍ ພົນຈັດຕະວາ ຄໍາໝັ້ນ ວັນນະວົງ ໄດ້ທວນຄືນມູນເຊື້ອການກໍາເນີດ ແລະ ເຕີບໃຫຍ່ຂະຫຍາຍຕົວ ຂອງສະຫະພັນນັກຮົບເກົ່າແຫ່ງຊາດລາວ ຕະຫຼອດ 20 ປີ ພາຍໃຕ້ຮົ່ມທຸງຂອງພັກ, ບັນດາພາລະບົດບາດ ແລະ ຜົນງານອັນພົ້ນເດັ່ນໃນການເຄື່ອນໄຫວປະກອບສ່ວນເຂົ້າໃນພາລະກິດປະຕິວັດຊາດ, ປົກປັກຮັກສາ ແລະ ພັດທະນາປະເທດຊາດ ເພື່ອສືບຕໍ່ເສີມຂະຫຍາຍທາດແທ້ມູນເຊື້ອປະຕິວັດເຂົ້າໃນການຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ຕິດພັນກັບມະຕິກອງປະຊຸມໃຫຍ່ຜູ້ແທນນັກຮົບເກົ່າທົ່ວປະເທດຄັ້ງທີ IV ໃຫ້ເປັນຂະບວນການ ແລະ ມີໝາກຜົນຕົວຈິງ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ ຈະໄດ້ສືບຕໍ່ຫັນລົງກໍ່ສ້າງຮາກຖານການເມືອງຢ່າງແຂງແຮງ, ເຊີດຊູຄວາມຮັບຜິດຊອບໃນການພັດທະນາ ສະຫະພັນນັກຮົບເກົ່າຕິດພັນກັບວຽກງານ 3 ສ້າງ, ພ້ອມກັນສ້າງຂະບວນການແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ໄປຄຽງຄູ່ກັບການປະຕິບັດ 7 ແຜນງານ 31 ໂຄງການ ເນື້ອໃນຂໍ້ແຂ່ງຂັນ 3 ດີ 6 ຮັກສາຂອງ ສະຫະພັນນັກຮົບເກົ່າ ແຕ່ນີ້ຮອດປີ 2025 ໃຫ້ປະກົດຜົນເປັນຈິງ.

## 6. ຄະນະຜູ້ແທນລາວ ເຂົ້າຮ່ວມກອງປະຊຸມສາກົນທາງໄກ ລະນຶກວັນສາກົນ ເພື່ອສັນຕິພາບ 21 ກັນຍາ 2022



ວັນທີ 21 ກັນຍາ 2022, ຄະນະຜູ້ແທນ ຄະນະສັນຕິພາບ ແລະ ສາມັກຄີ ຂອງ ລາວ ນໍາໂດຍ ທ່ານ ສົມມາດ ພົລເສນາ, ກໍາມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ປະທານຄະນະສັນຕິພາບ ແລະ ສາມັກຄີ ຂອງ ລາວ ໄດ້ເຂົ້າຮ່ວມກອງປະຊຸມສາກົນທາງໄກ ເພື່ອລະນຶກວັນສັນຕິພາບສາກົນ ຈັດໂດຍ ສະມາຄົມປະຊາຊົນຈີນ ເພື່ອສັນຕິພາບ ແລະ ຫຼຸດຜ່ອນອາວຸດ. ກອງປະຊຸມດັ່ງກ່າວ ມີການນໍາຂັ້ນສູງ ຂອງ ສປ ຈີນ, ເລຂາທິການໃຫຍ່ອົງການສະຫະປະຊາຊາດ ແລະ ບັນດາການນໍາ, ອະດີດການນໍາ ຂອງ ຫຼາຍປະເທດເຂົ້າຮ່ວມທັງແບບເຊິ່ງໜ້າ ແລະ ອອນລາຍ. ກອງປະຊຸມ ໄດ້ຕີລາຄາສະພາບການຂອງໂລກໃນປັດຈຸບັນ ທີ່ມີການຜັນແປໄປຢ່າງສະຫຼັບຊັບຊ້ອນ, ໄວວາ; ຫຼາຍຂົງເຂດ, ພາກພື້ນ ຍັງມີການເກີດການຂັດແຍ່ງ, ເກີດສົງຄາມກາງເມືອງ, ການປະທະກັນດ້ວຍອາວຸດ, ການຈໍາແນກເຊື້ອຊາດ, ສາສະໜາ, ຜິວພັນ, ໄພພິບັດທໍາມະຊາດ ແລະ ການແຜ່ລະບາດຂອງພະຍາດ ຍັງເປັນບັນຫາກີດໜ່ວງຕໍ່ການພັດທະນາ ແລະ ການຂະຫຍາຍຕົວ ຂອງ ເສດຖະກິດໂລກ. ທ່ານ ສົມມາດ ພົລເສນາ, ຕາງໜ້າຄະນະຜູ້ແທນລາວ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ການປະກອບສ່ວນຢ່າງເອົາໃຈໃສ່ ຂອງ ສປ ຈີນ, ອົງການສະຫະປະຊາ

ຊາດ ກໍຄື ບັນດາປະເທດ ຕໍ່ຄວາມພະຍາຍາມ ໃນການແກ້ໄຂບັນຫາຕ່າງໆ ຂອງ ໂລກ ເປັນຕົ້ນແມ່ນບັນຫາສະພາບແວດລ້ອມ, ບັນຫາໂລກຮ້ອນ, ຄວາມຂັດແຍ່ງໃນຂົງເຂດຕ່າງໆ; ເປັນການປະກອບສ່ວນສໍາຄັນ ໃນການປົກປັກຮັກສາ ແລະ ສ້າງສະພາບແວດລ້ອມອັນເອື້ອອໍານວຍໃຫ້ແກ່ການສ້າງສັນຕິພາບ, ສະຖຽນລະພາບ ແລະ ການພັດທະນາທີ່ຍືນຍົງ ແລະ ສົມດູນໃນພາກພື້ນ ແລະ ໃນໂລກ.

## 7. ພິທີມອບ-ຮັບ ໂຮງຮຽນປະຖົມສົມບູນໄຊຍະບູລີ, ແຂວງໄຊຍະບູລີ





ວັນທີ 19 ກັນຍາ 2022, ສະມາຄົມ ລາວ-ໄທ ແລະ ໄທ-ລາວ ເພື່ອມິດຕະພາບ ຮ່ວມກັບອົງການການປົກຄອງແຂວງໄຊຍະບູລີ ໄດ້ຈັດພິທີມອບ-ຮັບ ອາຄານໂຮງຮຽນປະຖົມສົມບູນໄຊຍະບູລີ, ເມືອງໄຊຍະບູລີ, ແຂວງໄຊຍະບູລີ. ໃຫ້ກຽດຮ່ວມພິທີດັ່ງກ່າວ ມີ ທ່ານ ພົງສະຫວັນ ສິດທະວົງ, ເຈົ້າແຂວງໄຊຍະບູລີ; ທ່ານ ວາລະໄຊ ເລັ່ງສະຫວັດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ; ທ່ານ ນາງ ວະຣາທິບ ສຸພະຊະວະໂຣດ, ອັກຄະຣາຊະທູດທີ່ປຶກສາ, ສະຖານເອກອັກຄະຣາຊະທູດແຫ່ງຣາຊະອານາຈັກໄທ ປະຈໍາ ສປປ ລາວ; ທ່ານປະທານສະມາຄົມ ລາວ-ໄທ ເພື່ອມິດຕະພາບ; ປະທານສະມາຄົມ ໄທ-ລາວ ເພື່ອມິດຕະພາບ ເຂົ້າຮ່ວມ. ທ່ານ ນາງ ວະຣາທິບ ສຸພະຊະວະໂຣດ, ອັກຄະຣາຊະທູດທີ່ປຶກສາ, ສະຖານເອກອັກຄະຣາຊະທູດແຫ່ງຣາຊະອານາຈັກໄທ ປະຈໍາ ສປປ ລາວ ເປັນຜູ້ມອບ ແລະ ຕາງໜ້າກ່າວຮັບ ໂດຍ ທ່ານ ພົງສະຫວັນ ສິດທະວົງ, ເຈົ້າແຂວງໄຊຍະບູລີ. ໂຮງຮຽນປະຖົມສົມບູນດັ່ງກ່າວ ແມ່ນໂຮງຮຽນມິດຕະພາບ ລາວ-ໄທ, ໄທ-ລາວ ແຫ່ງທີ 11, ເປັນສັນຍາລັກຂອງການສ້າງຕັ້ງສາຍພົວພັນການທູດລາວ-ໄທ ຄົບຮອບ 70 ປີ, ເຊິ່ງໄດ້ຮັບການສະໜັບສະໜູນງົບປະມານການກໍ່ສ້າງຈາກກະຊວງການຕ່າງປະເທດແຫ່ງຣາຊະອານາຈັກໄທ (ສະມາຄົມ ໄທ-ລາວ ເພື່ອມິດຕະພາບ) ໃນມູນຄ່າ 3,269,000,000 ກີບ (ສາມຕື້ ສອງຮ້ອຍຫົກສິບເກົ້າລ້ານ ກີບ) ຫຼື ເທົ່າກັບ 7,000,000 ບາດ (ເຈັດລ້ານບາດ).